**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0023 /ອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 09 ມັງກອນ 2019

# ຂໍ້ຕົກລົງ
# ວ່າດ້ວຍ ການຂຶ້ນທະບຽນວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018 ວ່າດ້ວຍ ການປັບປຸງ ລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນ ເພື່ອຜັນຂະຫຍາຍເນື້ອໃນ ຂໍ້ 1.2 ຂອງ ຄຳສັ່ງຂອງນາຍົກລັດຖະມົນຕີ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018 ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ປະກົດຜົນເປັນຈິງ ແລະ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ໃນການຂຶ້ນທະບຽນວິສາຫະກິດ ແນໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກ ແກ່ການດຳເນີນທຸລະກິດ ໂດຍຫຼຸດຂັ້ນຕອນ ແລະ ເວລາ ການສ້າງຕັ້ງວິສາຫະກິດ, ສ້າງທ່າແຮງແກ່ການສົ່ງເສີມ ແລະ ດຶງດູດການລົງທຶນ ຈາກທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນແກ່ການພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ ໃຫ້ເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 2 ການຂຶ້ນທະບຽນວິສາຫະກິດ**

ການຂຶ້ນທະບຽນວິສາຫະກິດ ແມ່ນ ການຮັບຮອງການສ້າງຕັ້ງວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ໂດຍຂຶ້ນຄັ້ງດຽວຕະຫຼອດໄລຍະການເຄື່ອນໄຫວຂອງວິສາຫະກິດນັ້ນ.

ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບ ທີ່ກໍານົດໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ໃບທະບຽນວິສາຫະກິດ ໝາຍເຖິງ ເອກະສານຢັ້ງຢືນກ່ຽວກັບການສ້າງຕັ້ງວິສາຫະກິດ ສ່ວນບຸກຄົນ ຫຼື ນິຕິບຸກຄົນ ຢ່າງຖືກຕ້ອງຕາມກົດໝາຍ;

2. ການຂຶ້ນທະບຽນວິສາຫະກິດ ສ່ວນບຸກຄົນ ໝາຍເຖິງ ການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອສ້າງຕັ້ງເປັນຫົວໜ່ວຍທຸລະກິດ ທີ່ບຸກຄົນຜູ້ດຽວເປັນເຈົ້າຂອງກໍາມະສິດ, ດໍາເນີນທຸລະກິດ ໃນນາມສ່ວນຕົວຂອງເຈົ້າຂອງວິສາຫະກິດ ແລະ ຮັບຜິດຊອບຕໍ່ໜີ້ສິນຂອງວິສາຫະກິດໂດຍບໍ່ຈໍາກັດ;

3. ການຂຶ້ນທະບຽນວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ໝາຍເຖິງ ການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອສ້າງຕັ້ງເປັນວິສາຫະກິດນິຕິບຸກຄົນ ເຊັ່ນ ວິສາຫະກິດຮຸ້ນສ່ວນສາມັນ, ວິສາຫະກິດຮຸ້ນສ່ວນຈໍາກັດ, ບໍລິສັດຈໍາກັດ, ບໍລິສັດມະຫາຊົນ, ບໍລິສັດລັດ ແລະ ອື່ນໆ;

4. ນິຕິບຸກຄົນ ໝາຍເຖິງ ຫົວໜ່ວຍທຸລະກິດທີ່ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍ ແລະ ມີອົງປະກອບທີ່ສົມບູນ ເຊັ່ນ ມີຊື່, ສະຖານທີ່ຕັ້ງສໍານັກງານ, ມີຊັບສົມບັດ ແລະ ທຶນ, ມີການຈັດຕັ້ງຄຸ້ມຄອງບໍລິຫານທີ່ເປັນລະບົບ, ມີຄວາມຮັບຜິດຊອບຕໍ່ໜີ້ສິນຕາມຮູບແບບວິສາຫະກິດ, ມີຄວາມສາມາດທາງດ້ານກົດໝາຍ ໃນການປະຕິບັດ ສິດ ແລະ ພັນທະ, ເປັນໂຈດ ຫຼື ຈໍາເລີຍ ຕາມທີ່ກົດໝາຍໄດ້ກໍານົດ;

5. ໃບອະນຸຍາດດໍາເນີນທຸລະກິດ ໝາຍເຖິງ ເອກະສານຢັ້ງຢືນ ສິດ ແລະ ພັນທະ ໃນການປະກອບທຸລະກິດ ໃນກິດຈະການໃດໜຶ່ງ ທີ່ຂະແໜງການກ່ຽວຂ້ອງ ຂອງລັດອອກໃຫ້ວິສາຫະກິດ ສໍາລັບກິດຈະການ ທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ;

6. ກິດຈະການທີ່ບໍ່ຈໍາເປັນຂໍອະນຸຍາດ ໝາຍເຖິງ ກິດຈະການທີ່ຂະແໜງການກ່ຽວຂ້ອງອະນຸຍາດໃຫ້ເຄື່ອນໄຫວທຸລະກິດໄດ້ເລີຍ ໂດຍບໍ່ຈໍາເປັນຕ້ອງຂໍໃບອະນຸຍາດລົງທຶນ ຫຼື ຂໍໃບອະນຸຍາດດໍາເນີນທຸລະກິດ ຊຶ່ງເປັນກິດຈະການທີ່ບໍ່ນອນໃນບັນຊີຄວບຄຸມ ຫຼື ກິດຈະການທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ;

7. ກິດຈະການທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ໝາຍເຖິງ ກິດຈະການທີ່ຂະແໜງການກ່ຽວຂ້ອງ ເຫັນວ່າມີຄວາມຈໍາເປັນຕ້ອງຄຸ້ມຄອງທາງດ້ານເຕັກນິກວິຊາການ ຫຼື ມີເງື່ອນໄຂສະເພາະໃນການດໍາເນີນທຸລະກິດດັ່ງກ່າວ ຊຶ່ງພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງກ່ອນ ຈຶ່ງສາມາດດໍາເນີນທຸລະກິດໄດ້;

8. ການເລີ່ມເຄື່ອນໄຫວທຸລະກິດ ໝາຍເຖິງ ການເລີ່ມຕົ້ນດໍາເນີນກິດຈະກໍາໃດໜຶ່ງ ກ່ຽວກັບກິດຈະການທີ່ໄດ້ຮັບອະນຸຍາດ ເຊັ່ນ ການເຊົ່າສະຖານທີ່, ການຈ້າງແຮງງານ, ການຂໍອະນຸຍາດປຸກສ້າງ ຫຼື ການຂໍອະນຸຍາດນໍາເຂົ້າ ຫຼື ສົ່ງອອກ.

ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ການແຈ້ງຂຶ້ນທະບຽນວິສາຫະກິດ ສ່ວນບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ.

# ໝວດທີ 2
# ຫຼັກການ ແລະ ເງື່ອນໄຂຂອງການຂຶ້ນທະບຽນວິສາຫະກິດ

## ມາດຕາ 5 ຫຼັກການ ການຂຶ້ນທະບຽນວິສາຫະກິດ

ການຂຶ້ນທະບຽນວິສາຫະກິດ ຕ້ອງປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍ້ຕົກລົງສະບັບນີ້.

ທຸກການເຄື່ອນໄຫວທຸລະກິດຢູ່ ສປປ ລາວ ຕ້ອງຂຶ້ນທະບຽນວິສາຫະກິດ ຍົກເວັ້ນການເຄື່ອນໄຫວທຸລະກິດ ທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເຊັ່ນ ທຸລະກິດຕາມລະດູການ.

ການຂຶ້ນທະບຽນວິສາຫະກິດ ແມ່ນໃຫ້ປະຕິບັດ ຕາມປະເພດກິດຈະການ ດັ່ງນີ້:

1. ກິດຈະການ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ແມ່ນ ໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ ໃນມາດຕາ 16 ຂອງ ກົດໝາຍວ່າດ້ວຍວິສາຫະກິດ ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ ສາມາດພິຈາລະນາຂຶ້ນທະບຽນວິສາຫະກິດ ໂດຍບໍ່ຕ້ອງຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງ. ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

   1.1 ກິດຈະການ ທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ ແມ່ນສາມາດດຳເນີນທຸລະກິດໄດ້ເລີຍ ໂດຍຈະລະບຸກິດຈະການດັ່ງກ່າວ ໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ;

   1.2 ກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ໃຫ້ໄປຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ ຈະອອກໜັງສືແນະນຳໃຫ້ ໂດຍຈະບໍ່ລະບຸກິດຈະການດັ່ງກ່າວ ໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ.

2. ກິດຈະການ ໃນບັນຊີຄວບຄຸມ ແລະ ກິດຈະການສຳປະທານ ແມ່ນ ໃຫ້ປະຕິບັດຕາມ ທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

## ມາດຕາ 6 ເນື້ອໃນ ແລະ ການປ່ຽນແປງເນື້ອໃນ ທະບຽນວິສາຫະກິດ

ເນື້ອໃນ ແລະ ຮູບແບບ ໃບທະບຽນວິສາຫະກິດ ແມ່ນ ປະຕິບັດຕາມແບບພິມ ທີ່ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ໄດ້ກຳນົດ ໃນນີ້:

1. ກິດຈະການທີ່ບໍ່ຈຳເປັນຂໍອະນຸຍາດ ແມ່ນສາມາດດຳເນີນທຸລະກິດໄດ້ເລີຍ ຊຶ່ງຈະລະບຸໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ. ພາຍຫລັງຂຶ້ນທະບຽນວິສາຫະກິດ ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ຂະແໜງການກ່ຽວຂ້ອງ ເພື່ອຊາບ ຕິດຕາມ ແລະ ຄຸ້ມຄອງ ກິດຈະການດັ່ງກ່າວ ຕາມພາລະບົດບາດ;

2. ກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຫຼື ຂໍອະນຸຍາດລົງທຶນ ແມ່ນຈະລະບຸໄວ້ໃນໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດລົງທຶນ ແລະ ສາມາດເຄື່ອນໄຫວທຸລະກິດ ໃນກິດຈະການຕາມໃບອະນຸຍາດດັ່ງກ່າວ.

ວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດຖືກຕ້ອງ ຕາມກົດໝາຍ ວ່າດ້ວຍວິສາຫະກິດແລ້ວ ສາມາດມີ ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ ຫຼາຍໃບ.

ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດໃນແຕ່ລະຄັ້ງ ຕ້ອງສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນທີ່ອອກໃບທະບຽນວິສາຫະກິດໃຫ້ ເພື່ອປ່ຽນແປງເນື້ອໃນ ແລະ ອອກໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ. ໃນກໍລະນີ ການປ່ຽນແປງເນື້ອໃນທະບຽນວິສາຫະກິດດັ່ງກ່າວ ຫາກມີຄວາມຈຳເປັນຕ້ອງປ່ຽນແປງເນື້ອໃນ ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ, ວິສາຫະກິດ ຕ້ອງສະເໜີຕໍ່ຂະແໜງການກ່ຽວຂ້ອງ ເພື່ອປ່ຽນແປງເນື້ອໃນໃບອະນຸຍາດໃຫ້ສອດຄ່ອງກັບໃບທະບຽນວິສາຫະກິດ ສະບັບປ່ຽນແປງໃໝ່.

**ມາດຕາ 7 ໜັງສືແນະນຳ**

ໜັງສືແນະນຳ ແມ່ນ ເອກະສານແນະນຳຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ໃຫ້ວິສາຫະກິດ ທີ່ໄດ້ຮັບໃບທະບຽນວິສາຫະກິດແລ້ວ ໄປພົວພັນກັບຂະແໜງການກ່ຽວຂ້ອງ ເພື່ອຂໍອະນຸຍາດດຳເນີນທຸລະກິດ ຫຼື ຂໍອະນຸຍາດລົງທຶນ. ກໍລະນີ ໃນໃບແຈ້ງລາຍການກິດຈະການສະເໜີປະກອບທຸລະກິດຂອງຜູ້ລົງທຶນ ມີແຕ່ລາຍການກິດຈະການທີ່ຕ້ອງຂໍອະນຸຍາດລົງທຶນ ຕາມບັນຊີຄວບຄຸມ ຫຼື ກິດຈະການສຳປະທານ ແມ່ນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ແນະນຳໃຫ້ຜູ້ລົງທຶນ ໄປຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ນຳຂະແໜງການແຜນການ ແລະ ການລົງທຶນກ່ອນ ຈຶ່ງຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 8 ຜູ້ມີສິດເຊັນໃບທະບຽນວິສາຫະກິດ**

ຜູ້ມີສິດເຊັນໃບທະບຽນວິສາຫະກິດ ຢູ່ແຕ່ລະຂັ້ນ ຕ້ອງແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ມີການແຕ່ງຕັ້ງເປັນລາຍລັກອັກສອນ ດັ່ງນີ້:

1. ຂັ້ນສູນກາງ: ແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ທີ່ມີຂໍ້ຕົກລົງ ຂອງຫົວໜ້າ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຕ່ງຕັ້ງໃຫ້ເປັນຜູ້ມີສິດເຊັນ ໃບທະບຽນວິສາຫະກິດ ຈຳນວນ 4 ທ່ານ ຂື້ນໄປ ຕາມການຈັດລຽງບູລິມະສິດ;

2. ຂັ້ນແຂວງ: ແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ທີ່ມີຂໍ້ຕົກລົງ ຂອງຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແຕ່ງຕັ້ງໃຫ້ເປັນຜູ້ມີສິດເຊັນ ໃບທະບຽນວິສາຫະກິດ ຈຳນວນ 3 ທ່ານ ຂື້ນໄປ ຕາມການຈັດລຽງບູລິມະສິດ;

3. ຂັ້ນເມືອງ: ແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ສັງກັດຢູ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ທີ່ມີຂໍ້ຕົກລົງ ຂອງຫົວໜ້າ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແຕ່ງຕັ້ງໃຫ້ເປັນຜູ້ມີສິດເຊັນ ໃບທະບຽນວິສາຫະກິດ ຈຳນວນ 2 ທ່ານ ຂື້ນໄປ ຕາມການຈັດລຽງບູລິມະສິດ.

**ມາດຕາ 9 ການແບ່ງຂັ້ນພິຈາລະນາ ການແຈ້ງຂຶ້ນທະບຽນວິສາຫະກິດ**

ການແຈ້ງຂຶ້ນທະບຽນວິສາຫະກິດ ມີການແບ່ງຂັ້ນພິຈາລະນາ ດັ່ງນີ້:

1. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ພິຈາລະນາ ການຂຶ້ນທະບຽນວິສາຫະກິດ ກ່ຽວກັບການສ້າງຕັ້ງສາຂານິຕິບຸກຄົນຕ່າງປະເທດ, ລັດວິສາຫະກິດ, ວິສາຫະກິດຮຸ້ນສ່ວນ, ບໍລິສັດ ແລະ ວິສາຫະກິດສ່ວນບຸກຄົນທີ່ມີທຶນຈົດທະບຽນແຕ່ ຫ້າຮ້ອຍລ້ານກີບ ຂື້ນໄປ ຊຶ່ງມີທີ່ຕັ້ງສຳນັກງານ ຢູ່ ນະ

ຄອນຫຼວງວຽງຈັນ ແລະ ແຂວງອື່ນທີ່ມີຄວາມຈໍາເປັນ ໂດຍຈະມີແຈ້ງການສະເພາະໃນແຕ່ລະໄລຍະ;

2. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ພິຈາລະນາ ການຂຶ້ນທະບຽນວິສາຫະກິດກ່ຽວກັບ ລັດວິສາຫະກິດ, ວິສາຫະກິດຮຸ້ນສ່ວນ, ບໍລິສັດ ເວັ້ນເສຍແຕ່ ບໍລິສັດມະຫາຊົນ, ແລະ ວິສາຫະກິດສ່ວນບຸກຄົນທີ່ມີທຶນຈົດທະບຽນແຕ່ ຫ້າຮ້ອຍລ້ານກີບ ຂຶ້ນໄປ ທີ່ມີທີ່ຕັ້ງສໍານັກງານຢູ່ໃນ ແຂວງ, ນະຄອນຫຼວງ ຂອງຕົນ;

3. ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ພິຈາລະນາ ການຂຶ້ນທະບຽນການສ້າງຕັ້ງສະຫະກອນ ຕາມທີ່ກໍານົດໃນດໍາລັດວ່າດ້ວຍສະຫະກອນ ແລະ ການຂຶ້ນທະບຽນວິສາຫະກິດສ່ວນບຸກຄົນທີ່ມີທຶນຈົດທະບຽນຕໍ່າກວ່າ ຫ້າຮ້ອຍລ້ານກີບ ລົງມາ. ໃນກໍລະນີ ເມືອງໃດໜຶ່ງ ຫາກບໍ່ມີຄວາມພ້ອມ ໃນການຂຶ້ນທະບຽນວິສາຫະກິດ ຕາມເງື່ອນໄຂດັ່ງກ່າວ ແມ່ນ ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຄົ້ນຄວ້າ ແລະ ນໍາສະເໜີ ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາ.

**ມາດຕາ 10 ຂັ້ນຕອນ ແລະ ກໍານົດເວລາ ການພິຈາລະນາອອກໃບທະບຽນວິສາຫະກິດ**

ຂັ້ນຕອນ ແລະ ກໍານົດເວລາ ໃນການພິຈາລະນາການຂຶ້ນທະບຽນວິສາຫະກິດ ໃຫ້ປະຕິບັດດັ່ງນີ້:

1. ປະກອບເອກະສານ ແຈ້ງຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມການແບ່ງຂັ້ນພິຈາລະນາ ທີ່ກໍານົດໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ພາຍຫຼັງໄດ້ຮັບເອກະສານແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງກວດກາຄວາມຖືກຕ້ອງ ຂອງເອກະສານ ຕາມທີ່ກໍານົດໄວ້ ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ໃຫ້ສໍາເລັດພາຍໃນ ໜຶ່ງ ຊົ່ວໂມງ ແລ້ວແຈ້ງຕອບຜູ້ຍື່ນຄໍາຮ້ອງໃນທັນທີ ຕາມແຕ່ລະກໍລະນີ ດັ່ງນີ້:

2.1 ເອກະສານຄົບຖ້ວນ ແລະ ຖືກຕ້ອງ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງມອບໃບຮັບເອກະສານ ໃຫ້ຜູ້ຍື່ນຄໍາຮ້ອງ. ໃບມອບຮັບເອກະສານ ຕ້ອງປະກອບດ້ວຍ ວັນເວລາມື້ຮັບເອກະສານ ແລະ ມື້ນັດພາຍມາຮັບເອົາໃບທະບຽນວິສາຫະກິດ ຊ້າສຸດບໍ່ໃຫ້ເກີນສິບວັນ ລັດຖະການ ນັບແຕ່ມື້ອອກໃບຮັບເອກະສານເປັນຕົ້ນໄປ.

2.2 ເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງທັນທີ ແລະ ແນະນໍາໃຫ້ນໍາໄປປັບປຸງແກ້ໄຂ ໂດຍຊີ້ໃຫ້ເຫັນຈະແຈ້ງ ຈຸດທີ່ຕ້ອງປັບປຸງແກ້ໄຂ ແລະ ລົງລາຍເຊັນຜູ້ແນະນໍາ ໃນເອກະສານແນະນໍາດັ່ງກ່າວ. ພາຍຫຼັງປັບປຸງແກ້ໄຂສໍາເລັດຄົບຖ້ວນ ແລະ ຖືກຕ້ອງແລ້ວ ແມ່ນປະຕິບັດຕາມຂັ້ນຕອນ ແລະ ກໍານົດເວລາ ຕາມທີ່ບົ່ງໄວ້ ຂໍ້ 2.1 ຂອງມາດຕານີ້.

**ມາດຕາ 11 ເອກະສານປະກອບ ແຈ້ງຂຶ້ນທະບຽນວິສາຫະກິດ**

ເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ຕາມແບບພິມ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ມີດັ່ງນີ້:

**ກ. ເອກະສານແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ ປະກອບມີ:**

1. ຄໍາຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດສ່ວນບຸກຄົນ;
2. ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ.

ຂ. ເອກະສານແຈ້ງຂຶ້ນທະບຽນວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ປະກອບມີ:

1. ຄໍາຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ;
2. ໃບແຈ້ງລາຍການກິດຈະການ ທີ່ສະເໜີປະກອບທຸລະກິດ;
3. ສັນຍາສ້າງຕັ້ງວິສາຫະກິດ ຍົກເວັ້ນບໍລິສັດຈໍາກັດຜູ້ດຽວ.

ໃນກໍລະນີ ນິຕິບຸກຄົນແຈ້ງຂຶ້ນທະບຽນວິສາຫະກິດ ຕ້ອງມີໃບມອບສິດຈາກວິສາຫະກິດແມ່.

## ມາດຕາ 12 ການກວດກາເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ

ພາຍຫຼັງ ໄດ້ຮັບເອກະສານແຈ້ງຂຶ້ນທະບຽນວິສາຫະກິດແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດ ສາມາດ ກວດສອບ ແລະ ໃຫ້ຄໍາແນະນໍາ ແຕ່ສະເພາະຂອບເຂດເນື້ອໃນ ດັ່ງນີ້:

1. ກວດກາ ຈໍານວນ ແລະ ປະເພດເອກະສານ ຕາມທີ່ກໍານົດໃນ ມາດຕາ 11 ຂອງຂໍ້ຕົກລົງ ສະບັບນີ້;
2. ກວດກາ ຄວາມຖືກຕ້ອງ ແລະ ສອດຄ່ອງ ຂອງເນື້ອໃນເອກະສານ ກ່ຽວກັບ:
   - 2.1 ຊື່ວິສາຫະກິດ ຕາມທີ່ກໍານົດໃນ ມາດຕາ 26 ແລະ 27 ຂອງ ກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
   - 2.2 ທຶນຈົດທະບຽນວິສາຫະກິດ ແລະ ສັດສ່ວນການຖືຮຸ້ນ ຕາມທີ່ກໍານົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
   - 2.3 ເນື້ອໃນຂອງໃບແຈ້ງລາຍການກິດຈະການ ທີ່ສະເໜີປະກອບທຸລະກິດ ຕາມທີ່ກໍານົດໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
   - 2.4 ທີ່ຕັ້ງສໍານັກງານ ແລະ ເບີຕິດຕໍ່ ຊຶ່ງອາດຈະເປັນທີ່ຕັ້ງຊົ່ວຄາວ ຫຼື ຖາວອນ ກໍໄດ້.

ສ່ວນການປະກອບເນື້ອໃນອື່ນໆ ຕາມແບບພິມ ແມ່ນຂຶ້ນກັບການຕົກລົງ ແລະ ເປັນຄວາມຮັບຜິດຊອບຂອງຜູ້ສ້າງຕັ້ງວິສາຫະກິດ ຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 13 ການສ້າງຕັ້ງສາຂາ, ສັດວິສາຫະກິດ ແລະ ສະຫະກອນ

ການສ້າງຕັ້ງສາຂາ, ສັດວິສາຫະກິດ ແລະ ສະຫະກອນ ແມ່ນໃຫ້ປະຕິບັດ ຕາມກົດໝາຍວ່າ ດ້ວຍວິສາຫະກິດ, ດໍາລັດວ່າດ້ວຍສະຫະກອນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 14 ການແຈ້ງຂໍ້ມູນ ກ່ຽວກັບການຂຶ້ນທະບຽນວິສາຫະກິດ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຢູ່ບ່ອນໃຫ້ການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ຕ້ອງຕິດຂໍ້ມູນຕົ້ນຕໍ ໃສ່ບ່ອນທີ່ສາມາດເຫັນໄດ້ຊັດເຈນ ດັ່ງນີ້:

1. ລາຍການເອກະສານ ທີ່ຕ້ອງປະກອບ ຕາມທີ່ກໍານົດໃນ ມາດຕາ 11 ຂອງ ຂໍ້ຕົກລົງ ສະບັບນີ້;
2. ຂັ້ນຕອນ ແລະ ກໍານົດເວລາ ການພິຈາລະນາ ແຈ້ງຂຶ້ນທະບຽນວິສາຫະກິດ;
3. ຊື່ ແລະ ນາມສະກຸນ, ຕໍາແໜ່ງ ພ້ອມທັງຕິດຮູບ ຜູ້ມີສິດເຊັນໃບທະບຽນວິສາຫະກິດ;

4. ຊື່ ແລະ ນາມສະກຸນ, ຕໍາແໜ່ງ ພ້ອມທັງຕິດຮູບ ຜູ້ທີ່ໄດ້ຮັບມອບໝາຍ ໃຫ້ຮັບຜິດຊອບວຽກງານການຮັບເອກະສານ ແລະ ກວດກາເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ;

5. ຄ່າທໍານຽມ ແລະ ຄ່າບໍລິການ ແຈ້ງຂຶ້ນທະບຽນວິສາຫະກິດ.

**ມາດຕາ 15 ການສະໜອງສິ່ງອໍານວຍຄວາມສະດວກ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຢູ່ບ່ອນໃຫ້ການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ມີສິ່ງອໍານວຍຄວາມສະດວກ ເຊັ່ນ ຄອມພິວເຕີ, ປີ້ນເຕີ ຕາມຄວາມເໝາະສົມ ໃຫ້ແກ່ຜູ້ມາພົວພັນແຈ້ງຂຶ້ນທະບຽນວິສາຫະກິດ.

## ໝວດທີ 3
## ການສະເໜີຂໍອະນຸຍາດດໍາເນີນທຸລະກິດ ພາຍຫຼັງການຂຶ້ນທະບຽນວິສາຫະກິດ

**ມາດຕາ 16 ການສະເໜີຂໍອະນຸຍາດດໍາເນີນທຸລະກິດ**

ກິດຈະການ ທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ແມ່ນຂະແໜງການກ່ຽວຂ້ອງ ເປັນຜູ້ກໍານົດໃນແຕ່ລະໄລຍະ ໂດຍມີກົດໝາຍ ຫຼື ລະບຽບການຂອງຂະແໜງການກ່ຽວຂ້ອງ ເປັນບ່ອນອີງ ໃນການອອກໃບອະນຸຍາດດໍາເນີນທຸລະກິດ.

ການດໍາເນີນທຸລະກິດ ໃນກິດຈະການທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ ໃຫ້ວິສາຫະກິດນໍາເອົາໃບທະບຽນວິສາຫະກິດ ແລະ ໜັງສືແນະນໍາ ສະບັບກາແດງ ຫຼື ສໍາເນົາ ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດດໍາເນີນທຸລະກິດ ຕາມຂັ້ນຕອນ ແລະ ລະບຽບການທີ່ຂະແໜງການກ່ຽວຂ້ອງ ໄດ້ກໍານົດ.

ນັບແຕ່ວັນຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ, ຖ້າຫາກວິສາຫະກິດໃດ ບໍ່ມີກິດຈະການທີ່ລະບຸໃນໃບທະບຽນວິສາຫະກິດ ຕ້ອງດໍາເນີນການເພື່ອໃຫ້ໄດ້ຮັບໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດໍາເນີນທຸລະກິດໃນກິດຈະການໃດໜຶ່ງ ຈາກຂະແໜງການກ່ຽວຂ້ອງ ພາຍໃນ 90 ວັນ ເວັ້ນເສຍແຕ່ລະບຽບກົດໝາຍທີ່ກ່ຽວຂ້ອງກໍານົດໄວ້ເປັນຢ່າງອື່ນ. ຖ້າຫາກບໍ່ສາມາດໄດ້ໃບອະນຸຍາດຕາມກໍານົດເວລາດັ່ງກ່າວ, ໃຫ້ຊີ້ແຈງເຫດຜົນ ຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ.

ນັບແຕ່ວັນໄດ້ຮັບ ໃບທະບຽນວິສາຫະກິດທີ່ມີລາຍການກິດຈະການສາມາດດໍາເນີນທຸລະກິດໄດ້ເລີຍ ຫຼື ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດໍາເນີນທຸລະກິດ ຕ້ອງເລີ່ມເຄື່ອນໄຫວທຸລະກິດຂອງຕົນ ພາຍໃນ 90 ວັນ.

ທຸກຄັ້ງ ທີ່ມີການອອກ ຫຼື ປ່ຽນແປງ ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດໍາເນີນທຸລະກິດແລ້ວ ວິສາຫະກິດຕ້ອງນໍາເອົາໃບອະນຸຍາດ ສະບັບກາແດງ 1 ສະບັບ ສົ່ງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ບ່ອນທີ່ອອກໃບທະບຽນວິສາຫະກິດ ພາຍໃນ 05 ວັນລັດຖະການ ນັບແຕ່ວັນອອກໃບອະນຸຍາດ ເປັນຕົ້ນໄປ ເພື່ອເກັບກໍາຂໍ້ມູນ ແລະ ປ້ອນເຂົ້າຖານຂໍ້ມູນວິສາຫະກິດ.

### ມາດຕາ 17 ເນື້ອໃນ ໃບອະນຸຍາດດຳເນີນທຸລະກິດ

ເນື້ອໃນ ແລະ ຮູບແບບໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການກ່ຽວຂ້ອງ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ວິສາຫະກິດ ຕາມທີ່ລະບຸໄວ້ໃນໃບທະບຽນວິສາຫະກິດ;
2. ເລກລະຫັດວິສາຫະກິດ;
3. ເລກປະຈຳຕົວຜູ້ເສຍອາກອນ;
4. ທີ່ຕັ້ງສຳນັກງານ;
5. ລາຍການກິດຈະການທີ່ອະນຸຍາດໃຫ້ດຳເນີນທຸລະກິດ ໂດຍລະບຸລະຫັດສາລະບານ ການຈັດແບ່ງຂະແໜງເສດຖະກິດ ຂອງ ສປປ ລາວ (LSIC).

### ມາດຕາ 18 ການເພີ່ມກິດຈະການ ພາຍຫຼັງຂຶ້ນທະບຽນວິສາຫະກິດ

ວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ແລະ ເຄື່ອນໄຫວທຸລະກິດໃນກິດຈະການໃດໜຶ່ງ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການແລ້ວ ຫາກຕ້ອງການດຳເນີນທຸລະກິດ ໃນກິດຈະການໃດໜຶ່ງເພີ່ມເຕີມ ແມ່ນ ສາມາດສະເໜີຕໍ່ຂະແໜງການກ່ຽວຂ້ອງໂດຍກົງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຖ້າເປັນກິດຈະການ ທີ່ບໍ່ຈຳເປັນຂໍອະນຸຍາດລົງທຶນ ແລະ ຂໍອະນຸຍາດດຳເນີນທຸລະກິດ;
2. ຍື່ນຄຳຮ້ອງຕໍ່ຂະແໜງການກ່ຽວຂ້ອງ ຖ້າເປັນກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ;
3. ຍື່ນຄຳຮ້ອງຕໍ່ຂະແໜງການແຜນການ ແລະ ການລົງທຶນ ຖ້າເປັນກິດຈະການ ທີ່ຕ້ອງຂໍອະນຸຍາດລົງທຶນ.

ພາຍຫຼັງໄດ້ຮັບ ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດແລ້ວ ໃຫ້ປະຕິບັດຕາມ ວັກ 5 ຂອງມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຄຸ້ມຄອງ ການຈັດຕັ້ງປະຕິບັດວຽກງານແຈ້ງຂຶ້ນທະບຽນວິສາຫະກິດ

### ມາດຕາ 19 ພາກສ່ວນຄຸ້ມຄອງວຽກງານແຈ້ງຂຶ້ນທະບຽນວິສາຫະກິດ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ໃນວຽກງານແຈ້ງຂຶ້ນທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນິຕິກຳອື່ນໆ ກ່ຽວຂ້ອງກັບການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທຸກຂັ້ນ ໃຫ້ເຂົ້າໃຈລະອຽດຈະແຈ້ງ;

2. ປະສານກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອສັງລວມຂໍ້ມູນກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງໄດ້ກຳນົດໄວ້;

3. ແຈ້ງໃຫ້ ຂະແໜງການທີ່ກ່ຽວຂ້ອງຊາບ ພາຍຫຼັງໄດ້ອອກໃບທະບຽນວິສາຫະກິດ ແຕ່ລະທີວພ່ອຍ ໂດຍສຳເນົາ ໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ;

4. ແຈ້ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ວິສາຫະກິດ ມີສຳນັກງານຕັ້ງຢູ່ ເພື່ອຄຸ້ມຄອງ ແລະ ຕິດຕາມ;

5. ພາຍຫຼັງຂຶ້ນທະບຽນວິສາຫະກິດ ຕ້ອງຕິດຕາມ, ຄຸ້ມຄອງການຈັດຕັ້ງທຸລະກິດ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 23 ຂອງກົດໝາຍວ່າດ້ວຍວິສາຫະກິດ;

6. ຕິດຕາມ ການຂໍອະນຸຍາດດຳເນີນກິດຈະການຂອງວິສາຫະກິດ ທີ່ກົມໄດ້ອອກໃບທະບຽນວິສາຫະກິດໃຫ້, ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ຕ້ອງເກັບກຳຂໍ້ມູນ ແລະ ປ້ອນຂໍ້ມູນເຂົ້າຖານຂໍ້ມູນວິສາຫະກິດ;

7. ແຕ່ງຕັ້ງ ພະນັກງານ ຜູ້ມີສິດເຊັນໃບທະບຽນວິສາຫະກິດ ຂັ້ນສູນກາງ ຕາມທີ່ກຳນົດໃນ ຂໍ້ 1 ຂອງມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

8. ແຈ້ງຂໍ້ມູນ ແລະ ສະໜອງສິ່ງອຳນວຍຄວາມສະດວກແກ່ການແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 14 ແລະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

9. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານ ການຂຶ້ນທະບຽນວິສາຫະກິດໃຫ້ຄະນະນຳກະຊວງ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ;

10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ໃນວຽກງານແຈ້ງຂຶ້ນທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນິຕິກຳອື່ນໆ ກ່ຽວຂ້ອງກັບການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຢູ່ບັນດາເມືອງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ ໃຫ້ທົ່ວເຖິງ ແລະ ເຂົ້າໃຈລະອຽດຈະແຈ້ງ;

2. ປະສານສົມທົບກັບບັນດາຂະແໜງການ ຢູ່ໃນແຂວງ, ນະຄອນຫຼວງຂອງຕົນ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບການຂຶ້ນທະບຽນວິສາຫະກິດ ໃນຮູບແບບໃໝ່ ຕາມທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ເພື່ອເຮັດໃຫ້ເຂົ້າໃຈເປັນເອກະພາບກັນ ແລະ ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິຜົນສູງ;

3. ແຈ້ງໃຫ້ ຂະແໜງການທີ່ກ່ຽວຂ້ອງຊາບ ພາຍຫຼັງໄດ້ອອກໃບທະບຽນວິສາຫະກິດ ແຕ່ລະທີວພ່ອຍ ໂດຍສຳເນົາໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ;

4. ແຈ້ງໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ບ່ອນທີ່ວິສາຫະກິດ ມີສຳນັກງານຕັ້ງຢູ່ ເພື່ອຄຸ້ມຄອງ ແລະ ຕິດຕາມ;

5. ພາຍຫຼັງຂຶ້ນທະບຽນວິສາຫະກິດ ຕ້ອງຕິດຕາມ, ຄຸ້ມຄອງການຈັດຕັ້ງທຸລະກິດ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 23 ຂອງກົດໝາຍວ່າດ້ວຍວິສາ

ທະກິດ;

6. ຕິດຕາມ ການຂໍອະນຸຍາດດຳເນີນກິດຈະການ ຂອງວິສາຫະກິດ ທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໄດ້ອອກໃບທະບຽນວິສາຫະກິດໃຫ້ ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ຕ້ອງເກັບກຳຂໍ້ມູນ ແລະ ປ້ອນຂໍ້ມູນເຂົ້າຖານຂໍ້ມູນວິສາຫະກິດ;

7. ແຕ່ງຕັ້ງ ພະນັກງານ ຜູ້ມີສິດເຊັນ ໃບທະບຽນວິສາຫະກິດຂັ້ນແຂວງ ຕາມທີ່ກຳນົດໃນ ຂໍ້ 2 ຂອງມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

8. ແຈ້ງຂໍ້ມູນ ແລະ ສະໜອງສິ່ງອຳນວຍຄວາມສະດວກແກ່ການ ແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 14 ແລະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້,

9. ເອົາໃຈໃສ່ ການຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ພະນັກງານຂອງ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ໃນວຽກງານການຂຶ້ນທະບຽນວິສາຫະກິດ;

10. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ການຂຶ້ນທະບຽນວິສາຫະກິດໃຫ້ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ປະຈຳ ໄຕມາດ, ຫົກເດືອນ ແລະ ປະຈຳປີ;

11. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 22 ສິດ ແລະ ໜ້າທີ່ ຂອງຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ

ໃນວຽກງານແຈ້ງຂຶ້ນທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນິຕິກຳອື່ນໆກ່ຽວຂ້ອງ ກັບການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ໃຫ້ສັງຄົມ ໃນຂອບເຂດເມືອງ, ນະຄອນຂອງຕົນ ໃຫ້ທົ່ວເຖິງ ແລະ ເຂົ້າໃຈລະອຽດຈະແຈ້ງ;

2. ປະສານສົມທົບກັບບັນດາຂະແໜງການ ຢູ່ໃນເມືອງ, ນະຄອນຂອງຕົນ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບການຂຶ້ນທະບຽນວິສາຫະກິດ ໃນຮູບແບບໃໝ່ ຕາມທີ່ກຳນົດໃນ ຂໍ້ຕົກລົງສະບັບນີ້ ເພື່ອເຮັດໃຫ້ເຂົ້າໃຈເປັນເອກະພາບກັນ ແລະ ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດຕິຜົນສູງ;

3. ແຈ້ງໃຫ້ ຂະແໜງການທີ່ກ່ຽວຂ້ອງຊາບ ພາຍຫຼັງໄດ້ອອກໃບທະບຽນວິສາຫະກິດແຕ່ລະທີ່ວພ່ອຍ ໂດຍສຳເນົາໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ;

4. ພາຍຫຼັງຂຶ້ນທະບຽນວິສາຫະກິດ ຕ້ອງຕິດຕາມ, ຄຸ້ມຄອງການຈັດຕັ້ງທຸລະກິດ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 23 ຂອງກົດໝາຍວ່າດ້ວຍວິສາຫະກິດ;

5. ຕິດຕາມ ການຂໍອະນຸຍາດດຳເນີນກິດຈະການຂອງວິສາຫະກິດ ທີ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ໄດ້ອອກໃບທະບຽນວິສາຫະກິດໃຫ້, ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ຕ້ອງເກັບກຳຂໍ້ມູນ ແລະ ປ້ອນຂໍ້ມູນເຂົ້າຖານຂໍ້ມູນວິສາຫະກິດ;

6. ແຕ່ງຕັ້ງ ພະນັກງານ ຜູ້ມີສິດເຊັນໃບທະບຽນວິສາຫະກິດ ຂັ້ນເມືອງ ຕາມທີ່ກຳນົດ ໃນຂໍ້ 3 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

7. ແຈ້ງຂໍ້ມູນ ແລະ ສະໜອງສິ່ງອຳນວຍຄວາມສະດວກແກ່ການແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ກຳນົດໃນ ມາດຕາ 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້;

8. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນວິສາຫະກິດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ ປະຈຳງວດ, ທຸກເດືອນ ແລະ ປະຈຳປີ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 23 ຂໍ້ຫ້າມ ສຳລັບພະນັກງານ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ຮຽກເອົາເອກະສານເພີ່ມເຕີມ ນອກຈາກທີ່ກຳນົດໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
3. ຮັບສິນບົນຈາກຜູ້ແຈ້ງຂຶ້ນທະບຽນວິສາຫະກິດ ຫຼື ຜູ້ອື່ນໆ ໂດຍສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນ;
4. ແກ່ຍາວເວລາໃນການພິຈາລະນາ ເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ;
5. ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

### ມາດຕາ 24 ຂໍ້ຫ້າມ ສຳລັບຜູ້ແຈ້ງຂຶ້ນທະບຽນວິສາຫະກິດ

ຫ້າມ ຜູ້ແຈ້ງຂຶ້ນທະບຽນວິສາຫະກິດ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫຼື ແຈ້ງຂໍ້ມູນບໍ່ຖືກຕ້ອງ ໂດຍເຈດຕະນາ;
2. ໃຫ້ສິນບົນ, ຂັດຂວາງ ການປະຕິບັດວຽກງານຂອງພະນັກງານ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ;
3. ບໍ່ປະຕິບັດ ຕາມມາດຕະການຕ່າງໆ ທີ່ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ພ້ອມດ້ວຍຄຳແນະນຳ ທີ່ລະບຸໃນດ້ານຫຼັງຂອງໃບທະບຽນວິສາຫະກິດ ຫຼື ຄຳແນະນຳຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດ;
4. ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 25 ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ, ລົງໂທດທາງອາຍາ ແລະ ມາດຕະການໂທດເພີ່ມ.

ມາດຕາ 26 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບການ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

ມາດຕາ 27 ມາດຕະການທາງດ້ານວິໄນ

ເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນຄວາມຜິດ ຕາມລະບຽບການ ພ້ອມທັງບັນທຶກໄວ້ໃນສຳນວນ ຊີວະປະຫວັດຂອງຜູ້ກ່ຽວ;

2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ການຍ້ອງຍໍ ຕາມທີ່ກຳນົດໃນ ກົດໝາຍວ່າດ້ວຍພະນັກງານ - ລັດຖະກອນ;

3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກ່ວາເກົ່າ;

4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

ມາດຕາ 28 ມາດຕະການປັບໃໝ

ຜູ້ແຈ້ງຂຶ້ນທະບຽນວິສາຫະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປັບໃໝ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ, ປະມວນກົດໝາຍແພ່ງ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ມາດຕາ 29 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

ມາດຕາ 30 ມາດຕະການທາງອາຍາ

ບຸກຄົນໃດທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມ ປະມວນກົດໝາຍອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

ມາດຕາ 31 ມາດຕະການໂທດເພີ່ມ

ນອກຈາກມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຫາ ມາດຕາ 30 ຂອງຂໍ້ຕົກລົງສະບັບນີ້ ຜູ້ກະທຳຜິດ ຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນ ການໂຈະ ຫຼື ຖອນໃບທະບຽນວິສາຫະກິດ, ຫ້າມບໍ່ໃຫ້ເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບປະສິດທິຜົນສູງ.

ບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ, ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນລັດຖະການ ແລະ ເລີ່ມຈັດຕັ້ງປະຕິບັດ ແຕ່ວັນທີ 1 ກຸມພາ 2019 ເປັນຕົ້ນໄປ.

ວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດກ່ອນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ. ໃນເວລາມີການປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນ ໃຫ້ປະຕິບັດຕາມເງື່ອນໄຂໃໝ່ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ດັ່ງນີ້:

1. ກິດຈະການໃດທີ່ລະບຸໃນດ້ານຫຼັງໃບທະບຽນວິສາຫະກິດ ແຕ່ໄດ້ຮັບອະນຸຍາດລົງທຶນ ຫຼື ອະນຸຍາດດຳເນີນທຸລະກິດແລ້ວ ແມ່ນສາມາດສືບຕໍ່ເຄື່ອນໄຫວທຸລະກິດ ໃນກິດຈະການ ຕາມທີ່ບົ່ງໄວ້ໃນໃບອະນຸຍາດນັ້ນໆ. ສ່ວນກິດຈະການທີ່ບໍ່ຈຳເປັນຂໍອະນຸຍາດ ແມ່ນຈະໄດ້ລະບຸໄວ້ດ້ານຫຼັງຂອງໃບທະບຽນວິສາຫະກິດໃໝ່ ເພື່ອເຄື່ອນໄຫວທຸລະກິດ ຕາມຂໍ້ຕົກລົງສະບັບນີ້;

2. ກິດຈະການໃດທີ່ລະບຸໃນດ້ານຫຼັງໃບທະບຽນວິສາຫະກິດ ທີ່ຕ້ອງຂໍອະນຸຍາດ ແຕ່ຍັງບໍ່ທັນໄດ້ຮັບອະນຸຍາດລົງທຶນ ຫຼື ອະນຸຍາດດຳເນີນທຸລະກິດ ຕ້ອງໄດ້ຂໍອະນຸຍາດ ນຳພາກສ່ວນກ່ຽວຂ້ອງ.

ຂໍ້ຕົກລົງ ສະບັບນີ້ປ່ຽນແທນ ຄຳແນະນຳ ສະບັບເລກທີ 0537/ອຄ.ກທຄວ, ລົງວັນທີ 4 ພຶດສະພາ 2018 ກ່ຽວກັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ຕິດພັນກັບການຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018. ໃຫ້

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ